# ມິຊຊາສຳລັບຜູ້ລ່ວງລັບ



**ພຣະວໍລະສານໂດຍນັກບຸນຢວງ 6, 37-40**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວກັບມະຫາຊົນຊາວຢິວວ່າ: ທຸກຄົນທີ່ພະບິດາມອບໃຫ້ເຮົາ ຈະມາຫາເຮົາ, ຜູ້ທີ່ມາຫາເຮົາ ເຮົາຈະບໍ່ໄລ່ເຂົາໜີອອກນອກ; ຍ້ອນວ່າເຮົາສະເດັດລົງມາຈາກ ສະຫວັນ, ບໍ່ແມ່ນເພື່ອທຳຕາມນ້ຳໃຈຂອງເຮົາ, ແຕ່ເພື່ອທຳຕາມນ້ຳພຣະໄທຂອງຜູ້ທີ່ຊົງໃຊ້ ເຮົາມາ. ນ້ຳພຣະໄທຂອງຜູ້ທີ່ຊົງໃຊ້ເຮົາມາຄື: ເຮົາບໍ່ຕ້ອງທຳໃຫ້ໃຜຈັກຄົນທີ່ພຣະບິດາຊົງ ມອບໃຫ້ເຮົານັ້ນເສຍໄປ, ແຕ່ທຳໃຫ້ເຂົາໄດ້ກັບເປັນຄືນມາໃນວັນສຸດທ້າຍ. ນີ້ແມ່ນນ້ຳພຣະໄທ ຂອງພຣະບິດາຄື: ໃຫ້ທຸກຄົນທີ່ເຫັນພຣະບຸດ ແລະເຊື່ອເຖິງພຣະອົງ ມີຊີວິດນິລັນດອນ, ແລ້ວເຮົາຈະໃຫ້ເຂົາກັບເປັນຄືນມາໃນວັນສຸດທ້າຍ.

*ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ*

**ບົດແບ່ງປັນ: ຢວງ 6, 37-40**

ພຣະເຢຊູເຈົ້າກ່າວວ່າ: *« ຜູ້ທີ່ມາຫາເຮົາ ເຮົາຈະບໍ່ໄລ່ເຂົາໜີອອກນອກ »*. ແຕ່ລະຄົນພວກເຮົາ ໃນຊີວິດ ບາງຄັ້ງກໍມີຄຳຖາມແລະຖາມຕົວເອງວ່າ: ເວລາຂ້ອຍບໍ່ຢູ່ໃນໂລກນີ້ແລ້ວ ຂ້ອຍຈະໄປໃສ? ແລະ ບ່ອນທີ່ຂ້ອຍໄປນັ້ນຈະເປັນແນວໃດ? ຄຳຖາມເຫລົ່ານີ້ອາດເຮັດໃຫ້ພວກເຮົາຢ້ານ ແລະກັງວົນ. ເພາະບໍ່ມີ ສິ່ງໃດໃນໂລກນີ້ເປັນສິ່ງຄ້ຳປະກັນໃຫ້ພວກເຮົາສຳລັບຊີວິດຫລັງຄວາມຕາຍໄດ້. ນອກຈາກຜູ້ທີ່ໄດ້ຕາຍໄປ ແລ້ວ ແລະໄດ້ກັບເປັນຄືນມາຈາກຄວາມຕາຍຄືອົງພຣະເຢຊູກຣິສໂຕເຈົ້າ. ໃນວັນນີ້ ພຣະອົງກ່າວກັບພວກ ເຮົາແຕ່ລະຄົນວ່າ: ເມື່ອພວກເຮົາແລ່ນມາຫາພຣະອົງ, ພຣະອົງຈະບໍ່ໄລ່ພວກເຮົາໜີ, ແຕ່ພຣະອົງພ້ອມທີ່ ຈະສະດັບຟັງແລະຊ່ວຍເຫລືອພວກເຮົາ. ໝາຍຄວາມວ່າ ພຣະເຈົ້າຜູ້ທີ່ພວກເຮົາເຊື່ອນີ້ບໍ່ແມ່ນພຣະເຈົ້າ

ຜູ້ໃຈຮ້າຍ ແລະມັກລົງໂທດມະນຸດ. ແຕ່ເປັນພຣະເຈົ້າຜູ້ໃຈດີ ແລະມີເມດຕາກາລຸນາແລະພ້ອມທີ່ຈະອະໄພໂທດໃຫ້ພວກເຮົາ, ຖ້າພວກເຮົາກັບມາຫາພຣະອົງ.

ເພາະສະນັ້ນ, ໃນວັນນີ້ພວກເຮົາຈຶ່ງມາວິງວອນພາວະນາ, ທຳບຸນສ່ວນກຸສົນໄປໃຫ້ຜູ້ລ່ວງລັບໄປນີ້. ຍ້ອນພວກເຮົາເຊື່ອວ່າພຣະເປັນເຈົ້າຜູ້ທີ່ພວກເຮົາວອນຂໍນີ້ ພຣະອົງຈະບໍ່ປະຖິ້ມພວກເຮົາ, ພະອົງຈະບໍ່ໄລ່ພວກເຮົາໜີ. ແຕ່ພຣະອົງພ້ອມທີ່ຈະສະດັບຟັງ ແລະຊ່ວຍເຫລືອພວກເຮົາທຸກຄົນ. ເພື່ອພວກເຮົາຈະໄດ້ຢູ່ຮ່ວມກັບພຣະອົງໃນເມືອງສະຫວັນ. ຍ້ອນພຣະເຈົ້າທີ່ພວກເຮົາເຊື່ອ ແມ່ນພຣະເຈົ້າຂອງພວກຜູ້ເປັນ. ດັ່ງນັ້ນພຣະອົງຈຶ່ງບໍ່ປາດຖະໜາໃຫ້ຜູ້ທີ່ເຊື່ອໃນພຣະອົງຕ້ອງສູນເສຍ ແຕ່ໄດ້ຮັບຊີວິດແລະແມ່ນຊີວິດທີ່ໝັ້ນຄົງຖາວອນ.

ຂໍໃຫ້ຄວາມເຊື່ອແລະຄວາມຫວັງໄວ້ໃຈນີ້ຊ່ວຍຜູ້ລ່ວງລັບໄປ ກໍຄືພວກເຮົາຜູ້ຍັງມີຊີວິດຢູ່ໃຫ້ໄດ້ຮັບຄວາມເມດຕາກາລຸນາແລະຄວາມຮອດຈາກພຣະເຈົ້າ ຜ່ານທາງຄວາມເຊື່ອຂອງພວກເຮົານີ້ເທີ້ນ.ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ